ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---===000===---

ຄະນະກຳມະການຄຸ້ມຄອງ
ຫຼັກຊັບ ແລະ ຕະຫຼາດຫຼັກຊັບ

ເລກທີ: 018 /ຄລຕ

ນະຄອນຫຼວງວຽງຈັນ, ວັນທີ: 24 DEC 2010

# ຂໍ້ຕົກລົງ
## ວ່າດ້ວຍຄ່າທຳນຽມ
## ທີ່ຕະຫຼາດຫຼັກຊັບລາວຕ້ອງປະຕິບັດຕໍ່ສຳນັກງານ ຄລຕ

- ອີງຕາມດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ່: 255/ນຍ ລົງວັນທີ່: 24 ພຶດສະພາ 2010.
- ອີງຕາມຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ່: 051/ນຍ ລົງວັນທີ່: 25 ພຶດສະພາ 2009.
- ອີງຕາມ ມາດຕາ 7 ຂອງຂໍ້ຕົກລົງວ່າດ້ວຍລະບຽບການຄຸ້ມຄອງຕະຫຼາດຫຼັກຊັບສະບັບເລກທີ່: 012/ຄລຕ ລົງວັນທີ່: 10 ພະຈິກ 2010.

ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ອອກຂໍ້ຕົກລົງ:

**ມາດຕາ 1:** ຕະຫຼາດຫຼັກຊັບລາວ ຕ້ອງປະຕິບັດພັນທະຄ່າທຳນຽມຕ່າງໆ ໃຫ້ແກ່ສຳນັກງານ ຄລຕ ເພື່ອເປັນການສະໜັບສະໜູນການເຄື່ອນໄຫວວຽກງານຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ດັ່ງນີ້:

- ຄ່າທຳນຽມການຊື້-ຂາຍຮຸ້ນ ໃນອັດຕາ 0.2% ຂອງມູນຄ່າການຊື້-ຂາຍຮຸ້ນແຕ່ລະຄັ້ງ.

**ມາດຕາ 2:** ມອບໃຫ້ສຳນັກງານ ຄລຕ, ຕະຫຼາດຫຼັກຊັບລາວ, ແລະ ພາກສ່ວນກ່ຽວຂ້ອງຈົ່ງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງໃຜລາວຢ່າງເຂັ້ມງວດ.

**ມາດຕາ 3:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ.

ສົມສະຫວາດ ເລັ່ງສະຫວັດ